# ພຣະທັມໂຢນາ


| 1 | 2 | 3 | 4 |
|---|---|---|---|


## ໂຢນາ

## JONAH

### 1 ໂຢນາບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ

Jonah Tries to Run Away from God

1 ພຣະຜູ້ເປັນເຈົ້າຊົງບອກໂຢນາວ່າ,
2 “ຈົ່ງຕຽມຕົວໄປຍັງມະຫານະຄອນນີເນເວ ເພື່ອຕັກເຕືອນໃຫ້ຊາວນະຄອນນັ້ນຮູ້ວ່າ ເຮົາຮູ້ເຫັນຄວາມປະພຶດ
ຊົ່ວຂອງເຂົາແລ້ວ”
3 ແຕ່ແທນທີ່ໂຢນາຈະປະຕິບັດຕາມພຣະດຳຣັດນັ້ນ ທ່ານກັບຫນີໄປຍັງເມືອງຕາຊິດ ເພື່ອຈະໃຫ້ພົ້ນຈາກພຣະ
ພັກພຣະຜູ້ເປັນເຈົ້າ ຄືທ່ານໄດ້ລົງໄປຍັງເມືອງໂຢບປາ ທີ່ນັ້ນທ່ານໄດ້ພົບເຮືອລຳນຶ່ງທີ່ຈະແລ່ນໄປຍັງເມືອງຕາ
ຊິດ ທ່ານຈຶ່ງໄດ້ເສັຽຄ່າໂດຍສານແລະລົງໄປໃນເຮືອເດີນທາງໄປຍັງເມືອງຕາຊິດກັບພວກລູກເຮືອ
4 ແຕ່ພຣະຜູ້ເປັນເຈົ້າໄດ້ຊົງບັນດານໃຫ້ເກີດລົມພະຍຸໃຫຍ່ພັດຜ່ານທະເລ ຈົນເຮືອລຳນັ້ນເກືອບແຕກຈົມລົງ
5 ບັນດາພວກລູກເຮືອເກີດຄວາມຕົກໃຈ ຕ່າງຄົນຈຶ່ງຮ້ອງຂໍໃຫ້ຄຸນພຣະຄຸນເຈົ້າຂອງພວກເຂົາມາຊ່ອຍເຫລືອ
ແລະຕ່າງຄົນກໍຂົນສິນຄ້າທີ່ບັນທຸກມານັ້ນຖິ້ມລົງທະເລ ເພື່ອໃຫ້ເຮືອເບົາລົງ ສ່ວນໂຢນາໄດ້ລົງໄປນອນຫລັບຢູ່
ໃນຫ້ອງເຮືອ
6 ນາຍເຮືອຈຶ່ງລົງໄປຫາທ່ານ ແລະເວົ້າວ່າ, “ເປັນຫຍັງເຈົ້າຈຶ່ງຍັງນອນຫລັບຢູ່? ຈົ່ງລຸກຂຶ້ນມາຮ້ອງຫາຄຸນພຣະ
ຄຸນເຈົ້າຂອງເຈົ້າໃຫ້ຊ່ອຍ ບາງເທື່ອພຣະເຈົ້າຈະຊົງພຣະກະຣຸນາ ແລະພວກເຮົາກໍຈະບໍ່ຕາຍ”
7 ຕໍ່ມາ ພວກລູກເຮືອໄດ້ຊັກຊວນກັນຈົກສລາກ ເພື່ອຢາກຈະຮູ້ວ່າໃຜເປັນຕົ້ນເຫດໃຫ້ເກີດພັຍອັນຕະລາຍນີ້ ທຸກ
ຄົນຈຶ່ງເຫັນດີ ເມື່ອຈົກສລາກຂຶ້ນມາກໍຖືກຊື່ໂຢນາ
8 ພວກເຂົາຈຶ່ງຖາມໂຢນາວ່າ, “ບັດນີ້ ຂໍຈົ່ງບອກໃຫ້ພວກເຮົາຮູ້ວ່າ ແມ່ນໃຜເປັນຕົ້ນເຫດໃນການນີ້? ເຈົ້າມາ
ຈາກໃສ? ເປັນຄົນຊາດໃດ? ປະເທດຂອງເຈົ້າຊື່ຫຍັງ? ແລະເຈົ້າມານີ້ເພື່ອມີກິດທຸຣະຫຍັງ?
9 ທ່ານໄດ້ຕອບວ່າ, “ຂ້າພະເຈົ້າເປັນຄົນຊາດເຮັບເຣີ ທີ່ນັບຖືພຣະຜູ້ເປັນເຈົ້າຜູ້ສະຖິດຢູ່ຟ້າສວັນ ຜູ້ຊົງສ້າງທະເລ
ແລະແຜ່ນດິນ”
10 ພໍໂຢນາເວົ້າດັ່ງນັ້ນ ພວກລູກເຮືອກໍຕົກໃຈຢ່າງໃຫຍ່ ຈຶ່ງເວົ້າໃສ່ທ່ານວ່າ, “ເປັນຫຍັງເຈົ້າຈຶ່ງເຮັດຜິດຢ່າງໃຫຍ່
ຫລວງປານນີ້?” (ການທີ່ເວົ້າຢ່າງນີ້ກໍເພາະເຂົາຮູ້ແລ້ວ ເຣື່ອງທີ່ເຂົາໄດ້ຫນີຈາກພຣະພັກພຣະຜູ້ເປັນເຈົ້າ)
11 ເມື່ອລົມພະຍຸພັດແຮງຂຶ້ນເລື້ອຍໆ ພວກລູກເຮືອກໍຖາມໂຢນາວ່າ, “ເຮົາຈະເຮັດແນວໃດກັບເຈົ້າ ລົມພະຍຸຈຶ່ງ
ຈະສງົບລົງ?”
12 ໂຢນາຕອບວ່າ, “ໃຫ້ຈັບຂ້າພະເຈົ້າຖິ້ມລົງທະເລເສັຽ ແລ້ວລົມພະຍຸກໍຈະສງົບລົງເພາະຂ້າພະເຈົ້າຮູ້ຢູ່ແລ້ວວ່າ
ແມ່ນຂ້າພະເຈົ້າເອງເປັນຕົ້ນເຫດທີ່ພາໃຫ້ເກີດລົມຮ້າຍ”
13 ພວກລູກເຮືອໄດ້ພ້ອມກັນພາຍເຮືອເຂົ້າມາຝັ່ງຢ່າງເຕັມກຳລັງແຕ່ບໍ່ສຳເຣັດ ເພາະລົມພະຍຸຍິ່ງພັດແຮງຂຶ້ນ
ເລື້ອຍໆ

14 ເມື່ອເປັນດັ່ງນັ້ນ ພວກລູກເຮືອກໍຮ້ອງໄຫວ້ວອນຕໍ່ພຣະຜູ້ເປັນເຈົ້າວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ໃນການທີ່ຈະຂ້າຄົນຜູ້ນີ້ ຂໍ  ພຣະອົງຢ່າລົງໂທດພວກຂ້າພຣະອົງເຖິງຕາຍທ້ອນ ດ້ວຍເຫດວ່າພຣະອົງເອງທີ່ສຳແດງໃຫ້ພວກຂ້າພຣະອົງເຮັດແນວນີ້"

15 ແລ້ວພວກເຂົາກໍຈັບໂຢນາຖິ້ມລົງນ້ຳທະເລ ຄວາມປັ່ນປ່ວນໃນນ້ຳທະເລກໍສງົບທັນທີ

16 ເມື່ອເຫັນດັ່ງນັ້ນ ພວກເຂົາກໍຢ້ານກົວພຣະຜູ້ເປັນເຈົ້າຫລາຍທີ່ສຸດ ຈຶ່ງພ້ອມກັນນ້ອມຖວາຍເຄື່ອງບູຊາ ແລະກ່າວຄຳປະຕິຍານຕົນຕໍ່ພຣະອົງ

17 ຝ່າຍພຣະຜູ້ເປັນເຈົ້າຈຶ່ງຊົງສັ່ງປາໃຫຍ່ໃຫ້ກືນກິນໂຢນາ ເຂົາຈຶ່ງຢູ່ໃນທ້ອງປານັ້ນເປັນເວລາສາມວັນສາມຄືນ

## 2 ໂຢນາອ້ອນວອນຂອບພຣະຄຸນພຣະຜູ້ເປັນເຈົ້າ

A Psalm of Thanksgiving

1 ໃນຂະນະທີ່ໂຢນາຢູ່ໃນທ້ອງປານັ້ນ ທ່ານໄດ້ກ່າວຂອບພຣະຄຸນພຣະຜູ້ເປັນເຈົ້າຂອງທ່ານວ່າ,

2 "ຂ້າແດ່ພຣະຜູ້ເປັນເຈົ້າ ໃນຄາວຂ້າພຣະອົງຖືກທໍລະມານ ຂ້າພຣະອົງໄດ້ຮ້ອງຂໍໃຫ້ພຣະອົງຊ່ອຍ ແລະພຣະອົງກໍຊົງຕອບຂ້າພຣະອົງ ຂ້າພຣະອົງຂໍຄວາມຊ່ອຍເຫລືອຈາກບ່ອນເລິກໃນພິພົບຄົນຕາຍ ພຣະອົງຊົງໄດ້ຍິນສຽງຂອງຂ້າພຣະອົງ

3 ພຣະອົງຊົງໂຍນຂ້າພຣະອົງລົງໄປ ເຖິງພື້ນທະເລເລິກ ຢູ່ທີ່ນັ້ນນ້ຳໄດ້ຖ້ວມຂ້າພຣະອົງ ຄື້ນອັນຮ້າຍແຮງທັງປວງຂອງພຣະອົງໄດ້ຕີກະທົບຂ້າພຣະອົງແລ້ວ

4 ຂ້າພຣະອົງຈຶ່ງທູນວ່າ ຂ້າພຣະອົງຖືກປັດເຊັ່ງອອກຈາກພຣະພັກຂອງພຣະອົງ ຂ້າພຣະອົງຈະບໍ່ເຫັນພຣະວິຫານສັກສິດຂອງພຣະອົງອີກ

5 ນ້ຳໄດ້ຖ້ວມຂ້າພຣະອົງແລະຂ້າພຣະອົງຫາຍໃຈບໍ່ໄດ້ ນ້ຳທະເລໄດ້ໂອບຕົວຂ້າພຣະອົງຫມົດສິ້ນແລະເທົາກໍພັນຫົວຂ້າພຣະອົງຢູ່

6 ຂ້າພຣະອົງໄດ້ລົງເຖິງຕີນພູ ລົງໄປເຖິງດິນບ່ອນມີປະຕູອັດໄວ້ຕລອດໄປ ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ແຕ່ພຣະອົງຊົງນຳຂ້າພຣະອົງຂຶ້ນມາຈາກບ່ອນເລິກນັ້ນໂດຍຍັງມີຊີວິດຢູ່

7 ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອຊີວິດຂອງຂ້າພຣະອົງສລົບໄປ ຂ້າພຣະອົງກໍລະນຶກເຖິງພຣະອົງ ແລະຄຳອ້ອນວອນຂອງຂ້າ  ພຣະອົງກໍມາເຖິງພຣະອົງເຂົ້າສູ່ພຣະວິຫານສັກສິດຂອງພຣະອົງ

8 ຄົນທັງຫລາຍທີ່ຂາບໄຫວ້ຮູບພຣະອັນບໍ່ມີປໂຍດ ໄດ້ປະຖິ້ມຄວາມຈົ່ງຮັກພັກດີທີ່ມີຕໍ່ພຣະອົງເສັຽ

9 ແຕ່ຂ້າພຣະອົງຈະຮ້ອງເພງສັຣເສີນພຣະອົງ ຂ້າພຣະອົງຈະຖວາຍສັດບູຊາແດ່ພຣະອົງ ຈະກະທຳຕາມສິ່ງທີ່ຂ້າພຣະອົງໄດ້ສັນຍາໄວ້ ຄວາມລອດພົ້ນມາຈາກພຣະຜູ້ເປັນເຈົ້າ"

10 ແລ້ວພຣະຜູ້ເປັນເຈົ້າຊົງສັ່ງໃຫ້ປາໃຫຍ່ໂຕນັ້ນຂຶ້ນມາຄາຍໂຢນາໄວ້ແຄມຫາດຊາຍ

## 3 ໂຢນາໃນນະຄອນນີເນເວ

Conversion of Nineveh

1 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂຢນາອີກວ່າ,

2 "ຈົ່ງຕຽມຕົວໄປຍັງມະຫານະຄອນນີເນເວ ເພື່ອປະກາດໃຫ້ຊາວນະຄອນນັ້ນຮູ້ຖ້ອຍຄຳທີ່ເຮົາໄດ້ບອກເຈົ້າ"

3 ໃນເທື່ອນີ້ໂຢນາໄດ້ທຳຕາມພຣະຜູ້ເປັນເຈົ້າຊົງສັ່ງ ຄືໄດ້ຕຽມຕົວອອກເດີນທາງໄປຍັງມະຫານະຄອນນີເນເວທັນທີ ນະຄອນນີ້ເປັນເມືອງໃຫຍ່ຫລາຍ ຕ້ອງໃຊ້ເວລາຍ່າງເຖິງສາມວັນຈຶ່ງຈະພົ້ນຕົວເມືອງ

4 ໂຢນາໄດ້ຕັ້ງຕົ້ນຍ່າງເຂົ້າໄປໃນນະຄອນນັ້ນເປັນລະຍະທາງນຶ່ງວັນ ແລ້ວໄດ້ຮ້ອງປະກາດວ່າ, "ອີກສີ່ສິບວັນນະຄອນນີເນເວກໍຈະຖືກທຳລາຍ"

5 ປະຊາຊົນຊາວນະຄອນນີເນເວກໍເຊື່ອຟັງພຣະເຈົ້າ ພວກເຂົາໄດ້ປະກາດໃຫ້ທຸກໆຄົນທັງຄົນຊັ້ນສູງແລະຄົນຊັ້ນ
ຕໍ່າ ອົດອາຫານແລະນຸ່ງຫົ່ມເຄື່ອງໄວ້ທຸກ ເພື່ອເປັນການສະແດງວ່າ ເຂົາທັງຫມົດໄດ້ເຊື່ອຟັງພຣະເຈົ້າແລ້ວ
6 ເມື່ອກະສັດນະຄອນນີເນເວຊົງຊາບເຫດການນີ້ ກໍຊົງລຸກຂຶ້ນຈາກບັນລັງ ຊົງແກ້ເຄື່ອງນຸ່ງອອກ ຊົງໃສ່ເຄື່ອງນຸ່ງ
ໄວ້ທຸກແທນ ແລະຊົງນັ່ງເທິງຂີ້ເຖົ່າໄຟ
7 ແລ້ວພຣະອົງໄດ້ມີພຣະຣາຊດຳຣັດປະກາດໃຫ້ຊາວນະຄອນນີເນເວຊາບທົ່ວເຖິງກັນວ່າ, “ໃນນາມກະສັດ
ແລະຄະນະຣາຊມົນຕຣີ ເຮົາຂໍປະກາດຫ້າມບໍ່ໃຫ້ປະຊາຊົນແລະສັດກິນ ຫລືດື່ມສິ່ງໃດໆທັງຫມົດ
8 ທັງຄົນແລະສັດຈະຕ້ອງໄວ້ທຸກ ໃຫ້ທຸກຄົນຕັ້ງຈິດຕັ້ງໃຈອ້ອນວອນພຣະເຈົ້າ ໃຫ້ເລີກປະພຶດຊົ່ວແລະອາດຈະຊົງ
ເຊົາພຣະພິໂຣດອັນຮ້າຍແຮງ ແລ້ວພວກເຮົາກໍຈະບໍ່ຕາຍ
9 ໃຜຈະຮູ້ວ່າພຣະເຈົ້າອາດຈະປ່ຽນພຣະທັຍ ລົດຜ່ອນພຣະພິໂຣດອັນຮຸນແຮງ ເພື່ອພວກເຮົາຈະບໍ່ພິນາດ”
10 ຕໍ່ມາ ພຣະເຈົ້າໄດ້ຊົງເຫັນຊາວນະຄອນນີເນເວເລີກປະພຶດຊົ່ວ ພຣະອົງຈຶ່ງຊົງປ່ຽນພຣະທັຍ ແລະບໍ່ຊົງລົງໂທດ
ເຂົາຕາມທີ່ໄດ້ຊົງສັນຍາໄວ້

## 4 ໂຢນາຮ້າຍ ແຕ່ພຣະເຈົ້າຊົງເມດຕາ

Jonah’s Anger

1 ໂຢນາຄຽດ ແລະບໍ່ພໍໃຈທີ່ພຣະເຈົ້າຊົງປ່ຽນພຣະທັຍ
2 ທ່ານໄດ້ອ້ອນວອນຕໍ່ພຣະຜູ້ເປັນເຈົ້າວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຂໍທູນພຣະອົງວ່າ ເມື່ອຄາວຍັງຢູ່
ໃນບ້ານເມືອງຕົນເອງ ຂ້າພຣະອົງໄດ້ເວົ້າແລ້ວແມ່ນບໍ່ວ່າພຣະອົງຈະປ່ຽນພຣະທັຍ? ສະນັ້ນຂ້າພຣະອົງຈຶ່ງ
ຢາກຫນີໄປຍັງເມືອງຕາຊິດເສັຽ ເພາະຂ້າພຣະອົງຮູ້ດີວ່າ ພຣະອົງເປັນພຣະເຈົ້າຜູ້ປະກອບໄປດ້ວຍພຣະມະ
ຫາກະຣຸນາທິຄຸນ ແລະເມດຕາປານີ ບໍ່ຄ່ອຍຊົງພິໂຣດຊົງພ້ອມຢູ່ສເມີທີ່ຈະປ່ຽນພຣະທັຍແລະບໍ່ລົງໂທດຜູ້ໃດ
3 ຂ້າແດ່ພຣະຜູ້ເປັນເຈົ້າ ບັດນີ້ຂໍພຣະອົງຊົງເອົາຊີວິດຂອງຂ້າພຣະອົງໄປເສັຽເທີນ ເພາະຂ້າພຣະອົງຢາກຈະ
ຕາຍເສັຽດີກວ່າຈະມີຊີວິດຢູ່ຕໍ່ໄປ”
4 ພຣະຜູ້ເປັນເຈົ້າຊົງຕອບໂຢນາວ່າ, “ການທີ່ເຈົ້າຄຽດນັ້ນ ມັນຖືກຕ້ອງແລ້ວຫລື?”
5 ຄັນແລ້ວ ໂຢນາໄດ້ອອກໄປນັ່ງຢູ່ທາງທິດຕາເວັນອອກຂອງນະຄອນ ຢູ່ທີ່ນັ້ນ ທ່ານໄດ້ປຸກຕູບຂຶ້ນຫລັງນຶ່ງ ເພື່ອ
ຢູ່ຄອຍເບິ່ງວ່າຈະມີເຫດການອັນໃດເກີດຂຶ້ນແກ່ມະຫານະຄອນນີ້
6 ຝ່າຍພຣະຜູ້ເປັນເຈົ້າຊົງສັ່ງໃຫ້ກົກຫມາກທຸ່ງເຫດເກີດຂຶ້ນໃກ້ໆຕູບໂຢນາ ເພື່ອທ່ານຈະໄດ້ອາສັຍຮົ່ມ ແລະເພື່ອ
ບັນເທົາທຸກບໍ່ໃຫ້ອຸກໃຈ ທ່ານດີໃຈຫລາຍທີ່ສຸດນຳກົກຫມາກທຸ່ງນີ້
7 ແຕ່ໃນຕອນເຊົ້າວັນຕໍ່ມາ ພຣະເຈົ້າໄດ້ຊົງສັ່ງໃຫ້ດ້ວງມາກັດກົກຫມາກທຸ່ງນັ້ນ ແລະມັນໄດ້ຫ່ຽວແຫ້ງຕາຍໄປ
8 ພໍຕາເວັນຂຶ້ນ ພຣະເຈົ້າກໍຊົງສັ່ງໃຫ້ລົມຮ້ອນພັດມາແຕ່ທາງຕາເວັນອອກ ຄວາມຮ້ອນຂອງແສງແດດໄດ້ແຜດ
ເຜົາໂຢນາຈົນສລົບໄປ ທ່ານຈຶ່ງເວົ້າວ່າ, “ຂ້າພຣະອົງຢາກຈະຕາຍເສັຽດີກວ່າຈະມີຊີວິດຢູ່”

Jonah’s Reproved

9 ພຣະເຈົ້າຊົງຖາມໂຢນາວ່າ, “ການທີ່ເຈົ້າຄຽດຮ້າຍກົກຫມາກທຸ່ງນັ້ນ ມັນຖືກຕ້ອງແລ້ວຫລື?” ໂຢນາໄດ້ທູນ
ຕອບວ່າ, “ການທີ່ຂ້າພຣະອົງຄຽດຈົນກັບຢາກຕາຍນັ້ນກໍຖືກຕ້ອງແລ້ວ”
10 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ກົກຫມາກທຸ່ງນີ້ ເຈົ້າບໍ່ໄດ້ລົງແຮງປູກ ມັນເກີດຂຶ້ນເອງໃນຄືນດຽວ ແລ້ວກໍຫ່ຽວ
ແຫ້ງຕາຍໄປໃນຄືນດຽວ ເຈົ້າກໍຍັງຄຶດຮອດມັນຢູ່
11 ເມື່ອເປັນດັ່ງນີ້ ເຮົາຈະບໍ່ສົງສານມະຫານະຄອນນີເນເວຫລື ຊຶ່ງມີເດັກນ້ອຍທີ່ບໍ່ຮູ້ດຽງສາກວ່າແສນສອງຫມື່ນ
ຄົນ ແລະມີສັດລ້ຽງເປັນຈຳນວນຫລາຍອີກດ້ວຍ”